ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ
ພະແນກ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ..183.../ພຕສ
ອຸດົມໄຊ, ວັນທີ...6...ມິຖຸນາ 2024

# ແຈ້ງການ

**ຮຽນ:** ທ່ານ ຫົວໜ້າຫ້ອງວ່າການເມືອງ 07 ເມືອງ ທີ່ນັບຖື.

**ເລື່ອງ:** ແຈ້ງເຕືອນໃຫ້ປະຊາຊົນທີ່ຈະມີການຈູດໄຮ່, ຈູດສວນໃກ້ກັບແລວສາຍໂທລະສັບ (ສາຍໃຍແກ້ວ) ແລະ ສະຖານີຮັບ - ສົ່ງສັນຍານໂທລະສັບເຄື່ອນທີ່ຕາມຈຸດຕ່າງໆ.

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງອຸດົມໄຊ.
- ອີງຕາມ ສະພາບອາກາດເຂົ້າສູ່ລະດູແລ້ງເປັນຊ່ວງໄລຍະທີ່ມີການຈູດໄຮ່, ຈູດສວນຂອງປະຊາຊົນ.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະ ພະແນກ ຕສ, ຄັ້ງວັນທີ 04 ມິຖຸນາ 2023.

ເພື່ອຮັບປະກັນຄວາມປອດໄພດ້ານຊັບສິນຂອງລັດ ແລະ ບໍ່ໃຫ້ມີການສື່ສານຕິດຂັດ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ຂໍຖືເປັນກຽດແຈ້ງມາຍັງທ່ານ ຫົວໜ້າຫ້ອງວ່າການເມືອງ 07 ເມືອງ ເພື່ອຊ່ວຍອອກແຈ້ງການໃຫ້ຄະນະພັກເຂດ, ອົງການປົກຄອງບ້ານຕ່າງໆ ຢູ່ພາຍໃນເມືອງຂອງທ່ານ ທີ່ເຮັດໄຮ່, ເຮັດສວນ ໃກ້ກັບແລວສາຍໂທລະສັບຜ່ານ ແລະ ສະຖານີຮັບ - ສົ່ງສັນຍານໂທລະສັບເຄື່ອນທີ່; ກ່ອນຈະມີການຈູດໄຮ່, ຈູດສວນຂອງປະຊາຊົນ, ແມ່ນໃຫ້ມີການເຊ່ຍອອກໄກຈາກແລວສາຍ ຢ່າງໜ້ອຍ 10 ແມັດຂຶ້ນໄປ ເພື່ອຮັບປະກັນຄວາມປອດໄພດ້ານຊັບສິນຂອງລັດ ແລະ ບໍ່ໃຫ້ເກີດໄຟໄໝ້ລາມໄປເຖິງສາຍໂທລະສັບ (ສາຍໃຍແກ້ວ) ແລະ ສະຖານີຮັບ - ສົ່ງສັນຍານໂທລະສັບເຄື່ອນທີ່ ທີ່ອາດຈະສົ່ງຜົນກະທົບເຮັດໃຫ້ສັນຍານໂທລະສັບມີການຕິດຂັດ, ເປ່ເພ, ເສຍຫາຍ ແລະ ກໍ່ສິ້ນເປືອງງົບປະມານໃນການສ້ອມແປງເປັນຈຳນວນຫລາຍ ເວລາຈູດໃຫ້ເຝົ້າລະວັງຕິດຕາມລະອຽດ ເພື່ອບໍ່ໃຫ້ເກີດໄຟໄໝ້ລາມ ຖ້າເຂດໃດຫາກບໍ່ຮັບປະກັນຄວາມປອດໄພ, ແມ່ນໃຫ້ໂທແຈ້ງພະນັກງານທີ່ກ່ຽວຂ້ອງດ່ວນຕາມ ເບີໂທລະສັບດັ່ງລຸ່ມນີ້:

- **ບໍລິສັດ ອີທີແອລ ຈຳກັດ** **020 2235 8008**
- **ບໍລິສັດ ສະຕາໂທລະຄົມ ຈຳກັດ** **020 9988 3810**
- **ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ** **020 5453 2555**

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອໃຫ້ຄວາມຮ່ວມມືນຳດ້ວຍ.

(ຮຽນມາດ້ວຍຄວາມນັບຖືຢ່າງສູງ)

**ເຊັນແທນຫົວໜ້າພະແນກ**
**ຮອງຫົວໜ້າພະແນກ**

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ

ຕຸ້ຍລີ ຕິວຢົງຈີ